## Special Economic Zone, Lecture Fourth: Committee of Special and Specific of Economic Zone

### 1. ຄະນະຮັບຜິດຊອບສ້າງຕັ້ງ ຂພສ

**1.1** ໂຄງປະກອບຂອງຄະນະຄຸ້ມຄອງເຂດເສດຖະກິດພິເສດ:

1) ເຈົ້າແຂວງ ຫຼື ຮອງເຈົ້າແຂວງ ບ່ອນທີ່ ຂພສ ຕັ້ງຢູ່ ຫຼື ບຸກຄົນອື່ນທີ່ເຫັນວ່າເໝາະສົມເປັນຫົວໜ້າຄະນະ.
2) ຫົວໜ້າ ຫຼື ຮອງຫົວໜ້າອົງການປະຈຳການ ຄຂສພ ຫຼື ຂະແໜງການອື່ນທີ່ເໝາະສົມ ເປັນຮອງຫົວໜ້າຄະນະ ແລະ ກຳມະການຈຳນວນໜຶ່ງ ຊຶ່ງມາຈາກຂະແໜງການຕ່າງໆ, ທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ຜູ້ພັດທະນາ.

**1.2 ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບສ້າງຕັ້ງ ຂພສ:**

1) ຄົ້ນຄວ້າ, ສະເໜີບັນຫາ ແລະ ພົວພັນກັບພາກສ່ວນຕ່າງໆກ່ຽວກັບການສ້າງຕັ້ງ ຂພສ;
2) ຄົ້ນຄວ້າ, ສ້າງແຜນແມ່ບົດພັດທະນາຮອບດ້ານຂອງ ຂພສ ໂດຍປະສານສົມທົບກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
3) ແກ້ໄຂບັນຫາຕ່າງໆ ທີ່ພົວພັນກັບການສ້າງຕັ້ງ ຂພສ ເປັນຕົ້ນບັນຫາທີ່ດິນ ແລະ ຜົນປະໂຫຍດຂອງປະຊາຊົນໃນ ຂພສ ໂດຍມີການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ;
4) ປະຕິບັດການຊົດເຊີຍຜົນປະໂຫຍດຂອງປະຊາຊົນ ຕາມລະບຽບການ ແລະ ຈັດສັນປະຊາຊົນທີ່ຖືກຜົນກະທົບຈາກໂຄງການ;
5) ຄົ້ນຄວ້ານະໂຍບາຍສົ່ງເສີມ ແລະ ເງື່ອນໄຂຕ່າງໆທີ່ກຳນົດໄວ້ໃນສັນຍາສຳປະທານ ຫວ່າງ ລັດຖະບານ ແລະ ຜູ້ພັດທະນາ;
6) ປະສານສົມທົບກັບອົງການປະຈຳການ ຄຂພສ ເພື່ອເຈລະຈາສັນຍາກັບຜູ້ພັດທະນາ ແລະ ຮ່າງສັນຍາເບື້ອງຕົ້ນ ເພື່ອສະເໜີ ຄຂພສ ພິຈາລະນາ;
7) ກໍລະນີມີຄວາມຈຳເປັນກໍສາມາດວ່າຈ້າງທີ່ປຶກສາ ຫຼື ຜູ້ຊ່ຽວຊານພາຍໃນ ແລະ ຕ່າງປະເທດ ເພື່ອຊ່ວຍຄົ້ນຄວ້າການສ້າງຕັ້ງ ຂພສ ໃຫ້ສຳເລັດ ສຳລັບການຄ່າໃຊ້ຈ່າຍໃນການວ່າຈ້າງດັ່ງກ່າວແມ່ນຜູ້ພັດທະນາເປັນຜູ້ຮັບຜິດຊອບ;
8) ຄະນະຮັບຜິດຊອບສ້າງຕັ້ງ ແລະ ຜູ້ພັດທະນາ ນຳສະເໜີຜົນຂອງການສຶກສາຄວາມເປັນໄປໄດ້ຂອງການພັດທະນາຕໍ່ກອງປະຊຸມຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ເພື່ອສະຫຼຸບຜົນຂອງການສຶກສາຄວາມເປັນໄປໄດ້ ແລະ ໃຫ້ຄຳເຫັນຊີ້ນຳດ້ານມະຫາພາກຕໍ່ໂຄງການ ເພື່ອຮັບປະກັນການພັດທະນາຢ່າງມີປະສິດທິຜົນ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
9) ຄະນະຮັບຜິດຊອບສ້າງຕັ້ງ ແລະ ຜູ້ພັດທະນາ ປຶກສາຫາລື ຫຼື ປັບປຸງບັນຫາທີ່ຍັງບໍ່ທັນແຈ້ງຕາມການຊີ້ນຳຂອງກອງປະຊຸມທີ່ໄດ້ກຳນົດໄວ້ໃນຂໍ້ 8 ຂ້າງເທິງນີ້, ເພື່ອຢັ້ງຢືນເປັນລາຍລັກອັກສອນໃຫ້ ອົງການປະຈຳການ ຄຂພສ ເພື່ອລາຍງານຕໍ່ ຄຂພສ;
10) ຄົ້ນຄວ້າ ແລະ ນຳສະເໜີບຸກຄະລາກອນທີ່ຈະປະກອບເຂົ້າໃນຄະນະບໍລິຫານ ຫຼື ສະພາບໍລິຫານ ຂພສ ເພື່ອນຳສະເໜີຂໍການແຕ່ງຕັ້ງຈາກປະທານ ຄຂພສ.
11) ດຳເນີນການສ້າງຕັ້ງ ຂສພ ໃຫ່ສຳເຫຼັດຕາມຈຸດປະສົງ, ລະດັບຄາດໝາຍ ແລະ ກຳນົດເວລາ.

1.3 **ການສິ້ນສຸດຂອງຄະນະຮັບຜິດຊອບສ້າງຕັ້ງ ຂພສ:**

ຄະນະຮັບຜິດຊອບສ້າງຕັ້ງ ຂພສ ຈະສິ້ນສຸດລົງໃນກໍລະນີໃດໜຶ່ງດັ່ງນີ້:

1) ລັດຖະບານ ຫຼື ຄຂພສ ໄດ້ຕົກລົງສ້າງຕັ້ງ ຂພສ ແລະ ແຕ່ງຕັ້ງຄະນະບໍລິຫານ ຫຼື ສະພາບໍລິຫານ ຂສພ ຢ່າງເປັນທາງການແລ້ວ;
2) ລັດຖະບານ ຫຼື ຄຂພສ ບໍ່ອະນຸມັດໃຫ້ສ້າງຕັ້ງ ຂພສ;
3) ກຳນົດເວລາການເຄື່ອນໄຫວຂອງຕົນຕາມທີ່ກຳນົດໄວ້ໃນຂໍ້ຕົກລົງແຕ່ງຕັ້ງໄດ້ສິ້ນສຸດລົງ ແລະ ບໍ່ໄດ້ຕໍ່ກຳນົດເວລາ ຫຼື ຖືກແຕ່ງຕັ້ງຄືນໃໝ່.

ແນວໃດກໍ່ຕາມ, ກົງຈັກການຈັດຕັ້ງໃນການຄຸ້ມຄອງບໍລິຫານເຂດເສດຖະກິດພິເສດນັ້ນຈະມີການປ່ຽນແປງໄປຕາມແຕ່ລະໄລຍະ. ທັງນີ້ກໍ່ເພື່ອໃຫ້ຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງການພັດທະນາ ແລະ ການຄຸ້ມຄອງບໍລິຫານ, ເພື່ອຮັບປະກັນໃຫ້ວຽກງານດຳເນີນໄປຢ່າງມີຄ່ອງແຄ້ວ, ມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມເຂັ້ມແຂງ ແລະ ຫຼຸດຜ່ອນຂອດຂັ້ນການປະສານງານ. ຊຶ່ງໄດ້ມີການກຳນົດໄວ້ໃນດຳລັດວ່າດ້ວຍ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ, ສະບັບເລກທີ 443/ນຍ, ລົງວັນທີ 26 ຕຸລາ 2021 ແລະ ມາດຕາ 6 ວ່າດ້ວຍກົງຈັກການຊ່ວຍວຽກ ຂອງດຳລັດ ເລກທີ 517/ນຍ ລົງວັນທີ 9 ທັນວາ 2010 ຂອງດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ, ເພື່ອຫຼຸດຜ່ອນຕັດຮອນຂອດຂັ້ນ ເພື່ອເຮັດໃຫ້ວຽກງານທາງດ້ານເອກະສານມີຄວາມວ່ອງໄປ ແລະ ຮັດກຸມ, ແນໃສ່ເສີມສ້າງຕຳແໜ່ງງານໃຫ້ມີຄວາມຊຳນານງານທາງດ້ານວິຊາການໂດຍກົງ. ພ້ອມກັນນັ້ນ, ກໍ່ໄດ້ປັບປຸງລະບົບຄຸ້ມຄອງບໍລິຫານ ເຂດເສດຖະກິດພິເສດ ຕາມຫົວໜ່ວບໍລິຫານນ້ອຍ-ສັງຄົມກ້ວາງ ຫຼື ຕາປະທັບດຽວດ້ວຍລະບົບອີເລັກໂຕນິກ ເພື່ອທັນເປັນອຸດສະຫະກຳທັນສະໄໝໃນການຄຸ້ມຄອງບໍລິຫານ, ໂປ່ງໃສ ແລະ ສາມາດກວດສອບໄດ້.

ຄະນະຄຸ້ມຄອງເຂດ ເຂດເສດຖະກິດພິເສດ ແມ່ນກົງການຈັດຕັ້ງໜຶ່ງ ທີ່ຂຶ້ນກັບກະຊວງແຜນການ ແລະ ການລົງທຶນ ມີຖານະທຽບເທົ່າກັບພະແນກການ ຂັ້ນແຂວງ ປະກອບມີຂະແໜງການ, ໜ່ວຍງານ ແລະ ວິຊາການຈຳນວນໜຶ່ງ. ແຂວງ, ນະຄອນຫຼວງ ທີ່ໄດ້ຮັບອະນຸຍາດສ້າງຕັ້ງເຂດສດຖະກິດພິເສດ ຈະມີຄະນະຄຸ້ມຄອງເຂດ ຄະນະໜຶ່ງເປັນຜູ້ຄຸ້ມຄອງ ແລະ ບໍລິຫານເຂດເສດຖະກິດພິເສດ ເພື່ອເປັນໃຈກາງປະສານງານ ອຳນວຍຄວາມສະດວກແກ່ການພັດທະນາ ແລະ ລົງທຶນຢູ່ໃນເຂດ.

ການແຕ່ງຕັ້ງຄະນະຄຸ້ມຄອງເຂດນີ້ ປະກອບມີ ຫົວໜ້າຄະນະຄຸ້ມຄອງເຂດ ແລະ ຮອງຫົວໜ້າຄຸ້ມຄອງເຂດຈຳນວນໜຶ່ງ. ຊຶ່ງຫົວໜ້າຄຸ້ມຄອງເຂດ ມີຕຳແໜ່ງບໍລິຫານເທົ່າກັບຫົວໜ້າພະແນກຂັ້ນແຂວງ, ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ພາຍຫຼັງທີ່ໄດ້ຮັບຮອງຈາກສະພາປະຊາຊົນ ຂັ້ນແຂວງ ແລະ ນະຄອນຫຼວງ ບົນພື້ນຖານການປະສານສົມທົບ ແລະ ຄວາມເປັນເອກະພາບກັບເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ບ່ອນເຂດເສດຖະກິດພິເສດຕັ້ງຢູ່.

ຮອງຫົວໜ້າຄະນະຄຸ້ມຄອງເຂດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໂດຍປຶກສາຫາລືກັບເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ບ່ອນເຂດເສດຖະກິດພິເສດຕັ້ງຢູ່.

ສະເພາະດ້ານວຽກງານວິຊາການ, ງົບປະມານ, ບຸກຄະລະກອນ ຂອງຄະນະຄຸ້ມຄອງເຂດ ແມ່ນຂຶ້ນກັບກະຊວງແຜນການ ແລະ ການລົງທຶນ.

**2. ສິດ ແລະ ໜ້າທີ່ຂອງຄະນະຄຸ້ມຄອງເຂດ.**

ໃນການຄຸ້ມຄອງວຽກງານເຂດເສດຖະກິດພິເສດ, ຄະນະຄຸ້ມຄອງເຂດ ມີສິດ ແລະ ໜ້າທີ່ດັ່ງນີ້:

1) ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດສັນຍາພັດທະນາ, ແຜນແມ່ບົດການພັດທະນາເຂດ, ແຜນງານ ແລະ ໂຄງການລົງທຶນ ໃນແຕ່ລະໄລຍະ;
2) ພິຈາລະນາອະນຸມັດ ການລົງທຶນໃນເຂດເສດຖະກິດພິເສດ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ; ອອກໃບຢັ້ງຢືນສິດນໍາໃຊ້ທີ່ດິນ, ອະສັງຫາລິມະຊັບ, ສິ່ງປຸກສ້າງຕ່າງໆ ພາຍໃນເຂດ,ເອກະສານ ກ່ຽວກັບການນໍາເຂົ້າ-ສົ່ງອອກສິນຄ້າ, ວັດຖຸອຸປະກອນຮັບໃຊ້ການຜະລິດ, ການກໍ່ສ້າງພື້ນຖານໂຄງລ່າງ, ອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ, ຈັດເກັບຄ່າທໍານຽມ ແລະ ຄ່າບໍລິການ ໂດຍສອດຄ່ອງກັບລະບຽບການ;
3) ໂຄສະນາດຶງດູດ ການພັດທະນາ ຫຼື ການລົງທຶນ ໃນເຂດເສດຖະກິດພິເສດ ລວມທັງເຜີຍແຜ່ກົດໝາຍ ແລະ ລະບຽບການ, ຂໍ້ມູນຂ່າວສານ ກ່ຽວກັບເຂດເສດຖະກິດພິເສດ;
4) ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ບ່ອນເຂດເສດຖະກິດພິເສດຕັ້ງຢູ່ ເພື່ອຮັບປະກັນວຽກງານປ້ອງກັນຊາດ ປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄຸ້ມຄອງຜູ້ຢູ່ອາໄສ ແລະ ຜູ້ອອກແຮງງານຢູ່ພາຍໃນເຂດ;
5) ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຂໍການມອບສິດ ໃນການພິຈາລະນາອອກໃບຢັ້ງຢືນບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ທໍາມະຊາດ, ບັດອະນຸຍາດອອກແຮງງານ, ບັດພັກເຊົາ ແລະ ເອກະສານອື່ນ ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານເຂດເສດຖະກິດພິເສດ ມີຄວາມສະດວກຄ່ອງຕົວ;
6) ປະສານສົມທົບກັບຜູ້ພັດທະນາເຂດ, ຜູ້ລົງທຶນ ແລະ ອົງການປົກຄອງທ້ອງຖິ່ນ ໃນການສ້າງໂຄງການພັດທະນາ ທີ່ມີສ່ວນຮ່ວມກັບປະຊາຊົນ ແລະ ໂຄງລ່າງໃນເຂດເຊື່ອມຕໍ່ ເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ;
7) ຕິດຕາມການປະຕິບັດພັນທະຕາມສັນຍາ, ລາຍຮັບ-ລາຍຈ່າຍຕ່າງໆ ຂອງເຂດເສດຖະກິດພິເສດ ຕາມຂອບເຂດສິດທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້;
8) ກໍານົດມາດຕະການປົກປັກຮັກສາສິ່ງແວດລ້ອມ, ຮັບປະກັນພັດທະນາແບບຍືນຍົງ;
9) ຄຸ້ມຄອງຈັດສັນ ແລະ ນໍາໃຊ້ທີ່ດິນ, ສິ່ງປຸກສ້າງຕ່າງໆຕາມລະບຽບການ;
10) ຈັດກອງປະຊຸມປະຈໍາເດືອນ ເພື່ອປຶກສາຫາລື ແກ້ໄຂວຽກຂອງຕົນ;
11) ສະຫຼຸບ, ລາຍງານຜົນການເຄື່ອນໄຫວປະຈໍາອາທິດ, ເດືອນ, ໄຕມາດ, ຫົກເດືອນ ແລະ ປີ. ພ້ອມທັງສັງລວມບັນຊີອະນຸມັດກິດຈະການລົງທຶນໃນເຂດ ໃຫ້ຂະແໜງແຜນການ ແລະ ການລົງທຶນ, ອົງການປົກຄອງ ຂັ້ນແຂວງ ແລະ ກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນແຂວງ ແລະ ຂັ້ນສູນກາງ; ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ[1].

**3. ສິດ ແລະ ໜ້າທີ່ຂອງອົງການປົກຄອງແຂວງ, ນະຄອນຫຼວງ.**

ໃນການຄຸ້ມຄອງວຽກງານເຂດເສະຖະກິດພິເສດ, ອົງການປົກຄອງແຂວງ, ນະຄອນຫຼວງບ່ອນເຂດເສດຖະກິດພິເສດຕັ້ງຢູ່ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1) ໂຄສະນາ, ເຜີຍແຜ່ ນະໂຍບາຍການພັດທະນາເຂດເສດຖະກິດພິເສດ ໃຫ້ປະຊາຊົນເຂົ້າໃຈ ແລະ ໃຫ້ການສະໜັບສະໜູນ;
2) ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ອຳນວຍຄວາມສະດວກ ໃຫ້ເຂດເສດຖະກິດພິເສດ ຢູ່ ແຂວງ, ນະຄອນຫຼວງຂອງຕົນ ໄດ້ເຄື່ອນໄຫວວຽກງານພັດທະນາເຂດເສດຖະກິດພິເສດ;
3) ຊີ້ນຳວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການພັດທະນາດ້ານວັດທະນາທຳສັງຄົມ, ການສ້າງໂຄງການ ແລະ ຂຶ້ນແຜນການລົງທຶນ ເພື່ອກໍ່ສ້າງພື້ນຖານໂຄງລ່າງທີ່ຈຳເປັນໃຫ້ແກ່ການຮອງຮັບ, ການສະໜັບສະໜູນ ຫຼື ການເຊື່ອມຕໍ່ກັບເຂດເສດຖະກິດພິເສດ ໃນທ້ອງຖິ່ນຂອງຕົນ;
4) ສ້າງກິດຈະກຳ ທີ່ຕິດພັນການພັດທະນາເຂດເສດຖະກິດພິເສດ ເພື່ອໃຫ້ປະຊາຊົນໄດ້ຜົນປະໂຫຍດຮ່ວມ , ເປັນຕົ້ນ ການສ້າງກິດຈະກຳປົ່ນອ້ອມ, ການຜະລິດ ແລະ ການສະໜອງວັດຖຸດິບ, ຜະລິດຕະພັນ, ສະບຽງອາຫານ ແລະ ອື່ນໆ;
5) ຈັດສັນ, ສຳຫຼວດ, ແກ້ໄຂ ແລະ ປະເມີນກ່ຽວກັບບັນຫາທີ່ດິນ ແລະ ໃຊ້ແທນຄ່າເສຍຫາຍ ຕໍ່ຜູ້ໄດ້ຮັບຜົນກະທົບຈາກໂຄງການພັດທະນາເຂດເສດຖະກິດພິເສດ;
6) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ[2].

**4. ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ.**

ຂະແໜງການອື່ນທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບຕາມພາລະບົດບາດຂອງຕົນ ໃນການຮ່ວມມື, ປະສານສົມທົບ, ອຳນວຍຄວາມສະດວກໃຫ້ຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມການລົງທຶນ ໃນເຂດເສດຖະກິດພິເສດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ໂດຍແຕ່ງຕັ້ງບຸກຄະລະກອນຂອງຕົນ ແລະ ປະກອບເຂົ້າໃນໜ່ວຍງານບໍລິການການລົງທຶນປະຕູດຽວ[3].

ຈາກຂໍ້ມູນທີ່ໄດ້ກ່າວມາຂ້າງເທິງນີ້ສາມາດສະຫຼຸບໄດ້ວ່າ,ກົນໄກໃນການສ້າງຕັ້ງ ແລະ ຄຸ້ມຄອງເຂດເສະຖະກິດພິເສດ ໃນ ສປປລາວ ແຕ່ລະໄລຍະແມ່ນມຄວາມແຕກຕ່າງກັນ ໂດຍສະເພາະ ແມ່ນການຄຸ້ມຄອງບໍລິຫານເຂດ. ຊຶ່ງໄດ້ມີການພັດທະນາ ແລະ ປັບປຸງກົນໄກ ແລະ ກົງຈັກການຈັດຕັ້ງ ເພື່ອເຮັດໃຫ້ວຽກງານມີຄວາມຄ່ອງແຄ້ວ, ໃນໄລຍະຜ່ານມາວຽກງານດັ່ງກ່າວນີ້ຈະຂຶ້ນກັບສຳນັກງານນາຍົກລັດຖະມົນຕີໂດຍກົງໃນການບໍລິການ ແລະ ຄຸ້ມຄອງ, ແຕ່ພາຍຫຼັງທີ່ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ, ສະບັບປັບປຸງ ປີ 2016 ແລະ ດຳລັດ ວ່າດ້ວຍເຂດເສດຖະກິດພິເສດ ປີ 2018, ວຽກງານດັ່ງກ່າວນີ້ຈຶ່ງຂຶ້ນກັບກະຊວງແຜນການ ແລະ ການລົງທຶນໂດຍກົງ ແລະ ຢູ່ພາຍໃຕ້ການຊີ້ນຳຂອງຄະນະຄຸ້ມຄອງ ແລະ ສົ່ງເສີມການລົງທຶນຂັ້ນສູນກາງ ໂດຍມີການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

ຄະນະຄຸ້ມຄອງເຂດເສດຖະກິດພິເສດ ທີ່ໄດ້ຮັບການແຕ່ງຕັ້ງ ຈະຕ້ອງໄດ້ມີການປະສານສົບທົບກັບຂະແໜງການຕ່າງໆ ທີ່ກ່ຽວຂ້ອງ ເຊັ່ນ: ອົງການປົກຄອງທ້ອງຖິ່ນບ່ອນເຂດເສດຖະກິດພິເສດຕັ້ງຢູ່ ເພື່ອອຳນວຍຄວາມສະດວກໃຫ້ແກ່ວຽກງານຂອງເຂດຖະກິດພິເສດ, ຮັບປະກັນໃຫ້ວຽກງານດັ່ງກ່າວໄດ້ຮັບການພັດທະນາຢ່າງມີປະສິດທິພາບ, ມີປະສິດທິຜົນ ແລະ ບໍ່ມີຜົນກະທົບຕໍ່ປະຊາຊົນ ແລະ ຜູ້ພັດທະນາ, ຮັບປະກັນໃຫ້ການຈັດຕັ້ງປະຕິບັດການພັດທະນາ ເປັນໄປຕາມແຜນພັດທະນາເຂດ.

---

[1] ມາດຕາ 57 ຂອງ ດຳລັດວ່າດ້ວຍ ເຂດເສດຖະກິດພິເສດ, ສະບັບເລກທີ 188/ລບ, ນະຄອນຫຼວງວຽງຈັນ, ວັນທີ 07.06.2018

[2] ມາດຕາ 58 ຂອງ ດຳລັດວ່າດ້ວຍ ເຂດເສດຖະກິດພິເສດ, ສະບັບເລກທີ 188/ລບ, ນະຄອນຫຼວງວຽງຈັນ, ວັນທີ 07.06.2018

[3] ມາດຕາ 59 ຂອງ ດຳລັດວ່າດ້ວຍ ເຂດເສດຖະກິດພິເສດ, ສະບັບເລກທີ 188/ລບ, ນະຄອນຫຼວງວຽງຈັນ, ວັນທີ 07.06.2018

## ເອກະສານອ້າງອີງ


1. ດຳລັດວ່າດ້ວຍ ເຂດເສດຖະກິດພິເສດ, ສະບັບເລກທີ 188/ລບ, ນະຄອນຫຼວງວຽງຈັນ, ວັນທີ 07.06.2018, ມາດຕາ 57;
2. ດຳລັດວ່າດ້ວຍ ເຂດເສດຖະກິດພິເສດ, ສະບັບເລກທີ 188/ລບ, ນະຄອນຫຼວງວຽງຈັນ, ວັນທີ 07.06.2018, ມາດຕາ 58;
3. ດຳລັດວ່າດ້ວຍ ເຂດເສດຖະກິດພິເສດ, ສະບັບເລກທີ 188/ລບ, ນະຄອນຫຼວງວຽງຈັນ, ວັນທີ 07.06.2018, ມາດຕາ 59.